

ຈົ່ງເອົາໃຈໃສ່ຕໍ່ການຊົງເອີ້ນຂອງພຣະອົງ



ຈົດໝາຍຄຳສອນ
ໂດຍ: ອາຈານ ເດເຣັກ ປິ້ຣນຊ

ເມື່ອພຣະເຍຊູຄິຣິດຊົງຕຣັດພຣະອັດຈະນະ ໃນມັດທາຍ 22:14 "ດ້ວຍວ່າ
ມີຫຼາຍຄົນ ຖືກເຊີນມາ ແຕ່ມີໜ້ອຍຄົນທີ່ຖືກເລືອກໄວ້."
ພຣະອົງບໍ່ໄດ້ຊົງກຳລັງສະເໜີຄວາມຄິດເຫັນ ຫຼື ຄວາມຫນ້າຈະເປັນ
ແຕ່ພຣະອົງຊົງກຳລັງກ່າວເຖິງຂໍ້ເທັດຈິງ ເຊິ່ງຂໍ້ເທັດຈິງນັ້ນ ຍັງຄົງເປັນຈິງ
ໃນທຸກວັນນີ້ເຊັ່ນດຽວກັບຕອນທີ່ພຣະເຍຊູຊົງຕຣັດພຣະຄຳນັ້ນຄັ້ງທຳອິດ ເຖິງວ່າ
ສິ່ງທີ່ພຣະອົງຊົງຕຣັດຈະກ່ຽວຂ້ອງກັບຄວາມລອດກໍ່ຕາມ
ແຕ່ຫຼັກການນັ້ນຍັງນຳໄປປະຍຸກໃຊ້
ກັບການຊົງເອີ້ນເຂົ້າສູ່ງານຮັບໃຊ້ຂອງຄຣິສຕຽນດ້ວຍ.

ໃນຈົດໝາຍຄຳສອນຂອງ ອາຈານ ເດເຣັກ ປຣິ້ນຊ ສະບັບນີ້ເຮົາຈະມາເບິ່ງນຳກັນ
ຢ່າງໃກ້ຊິດວ່າ ພວກເຮົາຈະສາມາດເອົາໃຈໃສ່ຕໍ່ການຊົງເອີ້ນ (ຫຼືການໄດ້ຮັບເຊີນ)
ເຂົ້າສູ່ ງານຮັບໃຊ້ກ່ຽວຂ້ອງກັບຄຳຕຣັດຂອງພຣະເຍຊູທີ່ວ່າ
"ດ້ວຍວ່າມີຫຼາຍຄົນຖືກເຊີນມາ ແຕ່ມີໜ້ອຍຄົນທີ່ຖືກເລືອກໄວ້" ໄດ້ແນວໃດ.

ໄວຍະເວລາຂອງການທົດສອບ

ຄຣິສຕຽນຈຳນວນຫຼາຍໄດ້ຮັບການຊົງເອີ້ນຈາກພຣະເຈົ້າ
ເຂົ້າສູ່ງານຮັບໃຊ້ຂອງພຣະອົງ ແຕ່
ມີພຽງຫນ້ອຍຄົນເທົ່ານັ້ນທີ່ໄດ້ຮັບການຊົງເລືອກ
ແລະແຕ່ງຕັ້ງໃຫ້ດຳເນີນໃນງານຮັບໃຊ້ນັ້ນ ເປັນຫຍັງຈຶ່ງເປັນແບບນັ້ນ?

ລະຫວ່າງຊ່ວງເວລາທີ່ ຄຣິສຕຽນໄດ້ຮັບການຊົງເອີ້ນເຂົ້າສູ່ງານຮັບໃຊ້ຄັ້ງທຳອິດ
ກັບເວລາທີ່ ພຣະເຈົ້າຊົງແຕ່ງຕັ້ງເຂົ້າໃຫ້ຮັບໃຊ້ຈິງນັ້ນ
ໂດຍປົກກະຕິຈະມີຊ່ວງເວລາໜຶ່ງຂອງການທົດສອບ ຫຼາຍຄັ້ງຍິ່ງເຈົ້າຕ້ອງ
ຮັບຜິດຊອບຫຼາຍເທົ່າໃດ ການທົດສອບກ່ຈະຍິ່ງເຂັ້ມຂົ້ນຫຼາຍຂຶ້ນເທົ່ານັ້ນ
ເພາະຜູ້ທີ່ອົດທົນຜ່ານການທົດສອບໄດ້ສຳເລັດເທົ່ານັ້ນທີ່ຈະໄດ້ຮັບການຊົງເລືອກ
ໃຫ້ຮັບໃຊ້ແທ້ຈິງ.

ໃນພຣະຄຳຜູ້ພິພາກສາ ເປັນຄັ້ງທຳອິດເມື່ອ Gideon
ໄດ້ເອີ້ນປະຊາກອນອິດສະຣາເອນ ເຂົ້າສູ່ງານຮັບໃຊ້ຂອງພຣະເຈົ້າ
ເພື່ອຕໍ່ສູ້ກັບຊາວມີຕຽນ ນັ້ນມີຊາຍຈຳນວນ 32,000 ຄົນ
ຕອບສະໜອງຕໍ່ການຊົງເອີ້ນ, ຢ່າງໃດກໍ່ຕາມເມື່ອ Gideon ໄດ້ນຳຜູ້ຕິດຕາມ
ກຸ່ມທຳອິດເຫລົ່ານັ້ນ
ເຂົ້າສູ່ການທົດສອບຕາມທີ່ພຣະເຈົ້າຊົງຮຽກຮ້ອງພວກເຂົາກ່ເຫຼືອ ທະຫານພຽງ
300 ຄົນເທົ່ານັ້ນເຊິ່ງນ້ອຍກວ່າ 1% ຂອງຜູ້ທີ່ໄດ້ຮັບການຊົງເອີ້ນ ທີ່ຜ່ານການ
ທົດສອບ ແລະໄດ້ຮັບການຊົງເລືອກສຳລັບງານຮັບໃຊ້ຂ້າພະເຈົ້າ
ຄາດວ່າຊັດສ່ວນນີ້ ອາດຈະເທົ່າກັບໃນປະຈຸບັນນີ້.

ສຸດທ້າຍແລ້ວສະຕິປັນຍາຂອງພຣະເຈົ້າກ່ໄດ້ຮັບການພິສູດໂດຍຜົນທີ່ເກີດຂຶ້ນ
Gideon ສາມາດປະຕິບັດພາລະກິດຮ່ວມກັບຊາຍ300
ຄົນທີ່ໄດ້ຮັບການທົດສອບ ແລະຜຶກອົບ
ແລະໄດ້ຮັບໄດ້ຜົນລັບຫຼາຍກ່ວາທີ່ເຂົາເຄີຍຕຣັດສຳເລັດໂດຍຮ່ວມກັບຄົນ 32,000
ຄົນ ເຊິ່ງເປັນພຽງຜູ້ທີ່ຕິດຕາມເທົ່ານັ້ນ

ລິຂະສິດ © 2022 ພັນທະກິດ ເດເຣັກ ປິ້ຣນຊ

ຫຼັກການດຽວກັນນີ້ຍັງໃຊ້ໄດ້ໃນປັດຈຸບັນຄືຜູ້ຮັບໃຊ້
ຂອງພຣະຄຣິດພຽງໜຶ່ງຄົນທີ່ໄດ້ຮັບການທົດສອບ, ການຝຶກຝົນ, ການເຝິກອົບ
ແລະປະຕິເສດຕົນເອງນັ້ນມີຄ່າເທົ່າກັບຄຣິສຕຽນທີ່ມີເຈດຕະນາດີ
ຈຳນວນໜຶ່ງຮ້ອຍຄົນ ທີ່ເປັນພຽງ ''ສະມາຊິກ'' ຂອງບາງກຸ່ມ
ຫຼືບາງອົງກອນເທົ່ານັ້ນ.

ກັບໃຈໃໝ່ ຫຼື ເປັນສາວົກ

ການປະກາດຂ່າວປະເສີດຍຸກໃໝ່
ມີແນວໂນ້ມໃນການອັດຜົນທີ່ນັ້ນຈຳນວນຜູ້ທີ່ກັບໃຈໃໝ່
ແຕ່ຂ້າພະເຈົ້າເຊື່ອວ່າພຣະເຈົ້າຊົງໃຫ້ຄວາມສຳຄັນກັບ
ການສ້າງສາວົກຫຼາຍກວ່າເຊັ່ນ:
ໃນສະໄໝທີ່ພຣະເຍຊູຊົງປະຕິບັດພັນທະກິດເທິງແຜ່ນດິນໂລກພຣະອົງໜ້າຈະນັບ
ຈຳນວນຄົນທີ່ກັບໃຈໃໝ່ໄດ້ຫຼາຍພັນຄົນແຕ່ໃນຊ່ວໂມງສຸດທ້າຍກ່ອນຖືກຄຶງທີ່ໄມ້
ກາງແຂນ
ພຣະອົງຊົງເຫຼືອພຽງຊາຍ11ຄົນທີ່ຍັງຄົງເປັນອັກຄະສາວົກແມ່ນແຕ່ຫຼັງການຟື້ນຄື
ນ ພຣະຊົນຂອງພຣະອົງ ຕໍ່ມາພຣະອົງກໍ່ໄດ້ປາກົດແກ່
"ພີ່ນ້ອງຫຼາຍກວ່າຫ້າຮ້ອຍຄົນ" ກໍ່ຕາມ (1ໂກລິນໂທ 15:6) ແຕ່ມີພຽງ 120
ຄົນເທົ່ານັ້ນທີ່ເຂົ້າໄປຫ້ອງຊັ້ນບົນເພື່ອສະແຫວງຫາ
ຣິດເດດຈາກຊັ້ນບົນເຊິ່ງຈະເຮັດໃຫ້ພວກເຂົາເປັນພະຍານທີ່ມີປະສິດທິພາບເພື່ອພ
ຣະອົງ.

ແນ່ນອນວ່າມີຄວາມແຕກຕ່າງຢ່າງຊັດເຈນ ລະຫວ່າງການໄດ້ຮັບການຊົງເອີ້ນ
ແລະ ການໄດ້ຮັບການຊົງເລືອກ,
ການຂະຫຍາຍອານາຈັກຂອງພຣະເຈົ້າທີ່ແທ້ຈິງນັ້ນຂຶ້ນຢູ່ກັບ
ຄຸນນະພາບຫຼາຍກວ່າປະລິມານສະເໝີເຖິງເວລາແລ້ວທີ່ເຮົາຈະເນັ້ນ ຍ້ຳຂໍ້ທົດຈິງ
ນີ້ອີກຄັ້ງໃນອັນນີ້.

ການທົດສອບສອງປະເພດ

ມີສອງວິທີຫຼັກໆທີ່ພຣະເຈົ້າຊົງໃຊ້ທົດສອບຄຣິສຕຽນທີ່ໄດ້ຮັບການຊົງເອີ້ນເຂົ້າສູ່ງາ
ນຮັບໃຊ້:

1. ໂດຍການປ່ອຍໃຫ້ສິ່ງຕ່າງໆໃຫ້ກາຍເປັນເລື່ອງຍາກ.
2. ໂດຍການປ່ອຍສິ່ງຕ່າງໆໃຫ້ກາຍເປັນເລື່ອງງ່າຍ.

ໃນຄຳອຸປະມາເລື່ອງຜູ້ຫວ່ານເມັດພືດໃນມາຣະໂກບົດທີ4
ພຣະເຍຊູຊົງປຽບທຽບເມັດພືດ ທີ່ຕົກໃສ່ດິນທີ່ມີຫີນກັບຄຣິສຕຽນຜູ້ທີ່
"ຍ້ອນບໍ່ມີຮາກໃນຕົນເອງຈຶ່ງທົນຢູ່ບໍ່ໄດ້ດົນ. ດັ່ງນັ້ນ
ເມື່ອໄດ້ຮັບຄວາມຍາກລຳບາກ
ຫຼືຖືກຂົ່ມເຫັງເພາະພຣະທຳນັ້ນເຂົາຈຶ່ງທໍ້ຖອຍໃຈໃນທັນທີ." (ຂໍ້17) ແຕ່ພຣະອົງ
ຍັງຊົງປຽບທຽບເມັດພືດທີ່ຕົກໃນໝູ່ໜາມກັບຄຣິສຕຽນຜູ້ທີ່
"ແຕ່ເຂົາມີຄວາມກັງວົນເຖິງຊີວິດນີ້, ການຢາກຮັ່ງຢາກມີ,
ຕະຫຼອດທັງຄວາມຕ້ອງການ
ທຸກສິ່ງທຸກຢ່າງໄດ້ເຂົ້າມາຫຸ້ມຫັດພຣະທຳໄວ້ພຣະທຳຈຶ່ງບໍ່ເກີດຜົນ."(ຂໍ້19)

ຄຣິສຕຽນບາງຄົນບໍ່ພ້ອມທີ່ຈະທົນຕໍ່ການຕໍ່ຕ້ານ, ການເຍາะເຍີ້ຍ,
ຄວາມຍາກລຳບາກ ຫຼື ຄວາມລົ້ມເຫຼວ
ເພື່ອເຫັນແກ່ຂ່າວປະເສີດສ່ວນຄົນອື່ນໆບໍ່ສາມາດຢືນຢູ່ໄດ້ທ່າມກາງ
ຄວາມສະດວກສະບາຍ ຄວາມເປັນທີ່ນິຍົມຊົມຊອບ ແລະຄວາມສຳເລັດທາງໂລກ
ບັນດາຜູ້ທີ່ພຣະເຈົ້າຊົງເອີ້ນເຂົ້າສູ່ງານຮັບໃຊ້ນັ້ນ
ຕ້ອງບໍ່ຖືກຂັດຂວາງດ້ວຍຝ່າຍໜຶ່ງ ຫຼືເຂົ້າໄປພົວພັນກັບອີກຝ່າຍໜຶ່ງ.

ພຣະຄຳພີເຕືອນຄຣິສຕຽນຢ່າງຕໍ່ເນື່ອງວ່າ ພວກເຂົາຈະຕ້ອງຄາດຄົດໄວ້ສະເໝີວ່າ
ພວກເຂົາ
ຕ້ອງພົບກັບການທົດສອບຈາກຈຸດເລີ່ມຕົ້ນຂອງຈົດໝາຍຈາກຢາໂກໂບນັ້ນ
ໄດ້ກ່າວໄວ້ວ່າ:

> “ພີ່ນ້ອງທັງຫຼາຍຂອງເຮົາເອີຍ,
> ເມື່ອພວກເຈົ້າພົບກັບການທົດລອງຕ່າງໆ ຈົ່ງຖືວ່າ
> ເປັນເລື່ອງໜ້າຍິນດີທີ່ສຸດ ເພາະພວກເຈົ້າຮູ້ຢູ່ວ່າເມື່ອຄວາມເຊື່ອ
> ຂອງພວກເຈົ້າທົນຕໍ່ການທົດລອງໄດ້ກໍ່ເຮັດໃຫ້ເກີດມີຄວາມໝັ້ນໃຈ.
> ” (ໂຢໂກ1:2-3 ພຄສ2015)

ເປໂຕຂຽນໄວ້ວ່າ:

> “ດັ່ງນັ້ນ ການທົດລອງຕ່າງໆທີ່ເກີດຂຶ້ນ
> ເພື່ອໃຫ້ຄວາມເຊື່ອທີ່ລອງແລ້ວນັ້ນ
> ປາກົດວ່າຄວນໄດ້ຮັບຄຳສັນລະເສີນສະຫງ່າຣາສີກຽດຕິຍົດ
> ໃນເວລາທີ່ພຣະເຍຊູເຈົ້າຈະສະເດັດມາປາກົດ.” (1ເປໂຕ1:7
> ພຄສ2015)

ການທົດສອບອັນຂັ້ນຂຶ້ນ ບໍ່ແມ່ນເລື່ອງແປກສຳລັບຜູ້ທີ່ເປັນຄຣິສຕຽນແທ້
ແລະການທົດລອງເຫຼົ່ານັ້ນ ເຂົ້າມາໂດຍການນັດໝາຍຂອງພຣະເຈົ້າເອງ.

ໂຢບ

ພຣະຄຳພີໃຫ້ຕົວຢ່າງ
ຢ່າງຫຼວງຫຼາຍຂອງບົດທົດສອບຜູ້ຮັບໃຊ້ທີ່ສັດຊື່ຂອງພຣະເຈົ້າ ຕ້ອງຜ່ານໄປໃຫ້ໄດ້
ຕົວຢ່າງສານສຶກໜຶ່ງກໍ່ຄືໂຢບນັ້ນເອງ.

ໃນຄຳພີຍານຂອງໂຢບໃນເລື່ອງບົດທົດສອບນັ້ນໂຢບກ່າວວ່າ:

> “ແຕ່ພຣະເຈົ້າຊົງຮູ້ທາງທີ່ຂ້ອຍກ້າວໄປ
> ເມື່ອພຣະອົງຊົງທົດສອບຂ້ອຍແລ້ວ
> ພຣະອົງຈະພົບວ່າຂ້ອຍບໍຣິສຸດເໝືອນຄຳ.
> ຂ້ອຍຕາມທາງຂອງພຣະອົງ ຢ່າງຊັດຊື່
> ແລະບໍ່ມີທ່າທີຫັນເຫໄປມາຕາມທາງໃດໆອີກ. ຂ້ອຍເຮັດຕາມ
> ເລື້ອຍໆສິ່ງທີ່ພຣະເຈົ້າໄດ້ສັ່ງມາຂ້ອຍເຮັດຕາມພຣະປະສົງບໍ່ແມ່ນ
> ເຮັດຕາມຂ້ອຍ." (ໂຢບ 23:10-12 ພຄສ2015)

ໃນຂໍ້ສຸດທ້າຍເຮົາພົບເຄັດລັບແຫ່ງໄຊຊະນະຂອງໂຢບເຊິ່ງກໍ່ຄື:
ທັດສະນະຄະຕິທີ່ໂຢບມີຕໍ່ ພຣະຄຳຂອງພຣະເຈົ້ານັ້ນເອງ
ບັນດາຜູ້ທີ່ຍົກຍ້ອງພຣະຄຳຂອງພຣະເຈົ້າໄວ້ເໜືອສິ່ງອື່ນ ຈະສາມາດຜ່ານ
ແລະໄດ້ຮັບໄຊຊະນະເໜືອການທົດສອບສະເໝີ.

ເຢເຣມີຢາ

ຜູ້ຮັບໃຊ້ຂອງພຣະເຈົ້າອີກຄົນໜຶ່ງທີ່ອົດທົນຕໍ່ການທົດສອບອັນແສນສາຫັດກໍ່ຄືເຢ
ເຣມີຢາ ເຊິ່ງເປັນຊາຍທີ່ຍັງໜຸ່ມແໜ້ນເມື່ອພຣະເຈົ້າຊົງເອີ້ນເຂົາ.

ໜຶ່ງໃນບົດທົດສອບທີ່ຍາກທີ່ສຸດສຳລັບໜຸ່ມສາວຄຣິສຕຽນໃນການອົດທົນຄື
ຄວາມງຽບເຫງົາ ຄວາມສັດຊື່ຕໍ່ພຣະເຈົ້າຂອງພວກເຂົາ
ສາມາດແຍກພວກເຂົາອອກຈາກຄວາມສຸກ ແລະ ກິດຈະກຳທາງໂລກທີ່ວ່າງເປົ່າ

ເຊິ່ງເພື່ອນໃນໄວດຽວກັນຂອງພວກເຂົາກຳລັງມົກໝຸ່ນຢູ່ສິ່ງນີ້
ເຮັດໃຫ້ພວກເຂົາຮູ້ສຶກເຫມືອນຖືກຕັດຂາດ.

ໃນບົດເພງຄ່ຳຄວນ 3:27-28 ເຢເຣມີຢາບັນຍາຍເຖິງບົດທົດສອບນີ້ວ່າ :

> "ເປັນການດີເລີດທີ່ຮຽນຮູ້ເອົາຄວາມອົດທົນໃນເວລາທີ່ເຮົາຍັງໜຸ່ມແ
> ໜ້ນຢູ່.
> ເມື່ອພວກເຮົາໄດ້ຮັບຄວາມທົນທຸກທໍລະມານກໍຄວນນັ່ງຢູ່ຄົນດຽວອົດ
> ທົນຢ່າງມິດຫງຽບ."

ເຢເຣມີຢາເອງກໍອົດທົນຕໍ່ບົດທົດສອບນີ້ (ເຢເຣມີຢາ 15:17) ເຊັ່ນດຽວກັບໂຢບ
ເຢເຣມີຢາ ກໍເປັນຜູ້ຮັບໃຊ້ທີ່ແທ້ຈິງຂອງພຣະເຈົ້າ
ຜູ້ເຊິ່ງໄດ້ຮັບກຳລັງໃນການອົດທົນຕໍ່ບົດທົດສອບ
ຈາກທັດສະນະຄະຕິຂອງເຂົາທີ່ມີຕໍ່ພຣະຄຳຂອງພຣະເຈົ້າ.

> "ພຣະອົງໄດ້ກ່າວແກ່ຂານ້ອຍ
> ແລະຂານ້ອຍກໍໄດ້ເຊື່ອຟັງພຣະອົງທຸກຖ້ອຍຄຳ
> ຂ້າແດ່ອົງພຣະຜູ້ເປັນເຈົ້າ ອົງຊົງຣິດອຳນາດຍິ່ງໃຫຍ່
> ຂານ້ອຍເປັນຂອງພຣະອົງ; ສະນັ້ນແຫຼະ
> ຖ້ອຍຄຳຂອງພຣະອົງຈຶ່ງເຮັດໃຫ້ຈິດໃຈຂອງຂານ້ອຍເຕັມລົ້ນ
> ດ້ວຍຄວາມຊຶ່ນຊົມຍິນດີ ແລະຄວາມສຸກໃຈ." (ເຢເຣມີຢາ15:16
> ພຄສ2015)

ໂມເຊ

ໂມເຊ ເປັນຜູ້ຮັບໃຊ້ທີ່ຍິ່ງໃຫຍ່ອີກຄົນໜຶ່ງຂອງພຣະເຈົ້າ
ຜູ້ຮຽນຮູ້ທີ່ຈະອົດທົນຕໍ່ບົດທົດສອບ,
ບົດທົດສອບທຳອິດຂອງໂມເຊຄືຍົດຖາບັນດາສັກ ແລະຄວາມເພີດເພີນທາງໂລກ.

ໂມເຊເຕີບໂຕໃນຣາຊະສຳນັກຂອງຟາໂຣ ໃນຖານະເປັນທາຍາດໂດຍສັນນິຖານ
ທີ່ມີສິດ ສືບທອດບັນລັງຂອງເອຢິບ ໂມເຊໜ້າຈະໄດ້ເພີດເພີນໄປກັບຄວາມມັ່ງມີ
ວັດທະນະທຳ ແລະຄວາມຫຼູຫຼາ ຟຸ້ມເຟືອຍຂອງເອຢິບ
ແຕ່ເມື່ອລາວປະຕິເສດທີ່ຈະຍອມຈຳນົນຕໍ່ສິ່ງຫຼໍ່ໃຈນີ້
ລາວກໍຖືກປະຕິເສດໂດຍຄົນຂອງເຂົາເອງ ຖືກຂົ່ມເຫັງໂດຍຟາໂຣ
ແລະຖືກບັງຄັບໃຫ້ທົນຕໍ່40 ປີແຫ່ງການຖືກເນຣະເທດ, ຄວາມຍາກຈົນ
ແລະຄວາມງຽບເຫງົາ ເຖິງຢ່າງໃດກໍ່ຕາມ
ລາວກໍສາມາດເອົາຊະນະການທົດລອງທັງໝົດນີ້ໄດ້
ເພາະເຂົາປະຕິເສດທີ່ຈະຍອມໃຫ້ສິ່ງ ດຶງດູດໃຈເຊັ່ນ ຄວາມມັ່ງມີ ແລະ
ກຽດສັກສີຊົ່ວຄາວ ທີ່ຈະເຮັດໃຫ້ລາວເບິ່ງບໍ່ເຫັນພຣະສິຣິ ທີ່ແທ້ຈິງຂອງພຣະເຈົ້າ
ແລະລາງວັນນິຣັນດອນທີ່ພຣະເຈົ້າໄດ້ສະເໜີໃຫ້.

ເຮັບເລີ 11:26-27 ພຄສ2015
ໄດ້ໃຫ້ເຫດຜົນທີ່ຢູ່ເບື້ອງຫຼັງຄວາມອົດທົນຂອງໂມເຊວ່າ:

> "ເພີ່ນຖືວ່າຄວາມທົນທຸກ ແລະ
> ຄວາມອັບອາຍເພື່ອພຣະຄິດນັ້ນກໍມີຄ່າກ່ວາ
> ຊັບສົມບັດທັງຫມົດຂອງເອຢິບ. ດ້ວຍວ່າ,
> ເພີ່ນເລັງເຫັນລາງວັນທີ່ເພີ່ນຈະໄດ້ຮັບນັ້ນ.
> ເພາະເພີ່ນມີຄວາມເຊື່ອແບບນັ້ນ
> ເພີ່ນຈຶ່ງໄດ້ອອກຈາໍກປະເທດເອຢິບໄປ
> ໂດຍບໍ່ຢ້ານກົວຕໍ່ຄວາມໂກດຮ້າຍຂອງກະສັດ. ດ້ວຍວ່າ,
> ເພີ່ນໄດ້ຫມັ້ນໃຈ ເໝືອນກັບວ່າຕົນໄດ້ເຫັນພຣະເຈົ້າທີ່ຕາເຫັນບໍ່ໄດ້."

ທຸກວັນນີ້, ຄຣິສຕຽນໜຸ່ມສາວຈຳນວນຫຼາຍເບິ່ງບໍ່ເຫັນພຣະສິຣິທີ່ແທ້ຈິງ ແລະ
ລາງວັນ ນິຣັນດອນຂອງການຮັບໃຊ້ແບບຄຣິສຕຽນ
ເພາະຄວາມຄາດຫວັງໃນຄວາມສຸກສະບາຍ ແລະຄວາມສຳເລັດທາງໂລກ
ເຊິ່ງກົງກັນຂ້າມກັບທັດສະນະຄະຕິຂອງໂມເຊຢ່າງສິ້ນເຊີງ.

ຄວາມສຳຄັນຂອງການຊົງເອີ້ນ

ພຣະຄຳພີໃຊ້ຄຳທີ່ ຊົງພະລັງສາມຄຳກ່ຽວກັບການຊົງເອີ້ນຂອງພຣະເຈົ້າ
ປະການທຳອິດຄື "ການຊົງເອີ້ນແຫ່ງເບື້ອງເທິງ" (ຟີລິບປອຍ 3:14)
ການຊົງເອີ້ນນັ້ນຢູ່ໃນລະດັບທີ່ແຕກຕ່າງ ຈາກຄວາມສົນໃຈ
ແລະການຮຽກຮ້ອງອື່ນໆ ໃນຊີວິດຂອງເຮົາສຳລັບຄຣິສຕຽນແລ້ວ
ບໍ່ມີສິ່ງອື່ນໃດທີ່ຈະມາກ່ອນການຊົງເອີ້ນຂອງພຣະເຈົ້າໄດ້ ບໍ່ວ່າຈະເປັນຄອບຄົວ ຫຼື
ຄວາມສຳພັນທາງໂລກໃດໆ "ຖ້າຜູ້ມາຫາເຮົາແລະ ບໍ່ຊັງພໍ່ແມ່, ລູກເມຍ,
ອ້າຍນ້ອງ ຊາຍຍິງກັບທັງຊີວິດຂອງຕົນເອງ ຜູ້ນັ້ນຈະເປັນສາວົກຂອງເຮົາບໍ່ໄດ້."
(ລູກາ14:26 ພຄສ2015)

ປະການທີ່ສອງ ການຊົງເອີ້ນໃຫ້ຮັບໃຊ້ພຣະເຈົ້ານັ້ນ ຖືເປັນ
"ການຊົງເອີ້ນອັນບໍຣິສຸດ."

(2ຕີໂມທຽວ1:9) ເປັນສິ່ງທີ່ສັກສິດ
ເປັນສິ່ງທີ່ເຮົາຕ້ອງຄອຍປົກປ້ອງດ້ວຍຄວາມຫວງແຫນ ຈາກການປະນີປະນອມ
ຫຼືຄວາມແປດເປື້ອນທຸກຢ່າງ ທັ້ງຍັງຮຽກຮ້ອງການອຸທິດເວລາ ໃນການ ອະທິຖານ
ແລະການປະຕິເສດຕົນເອງຝ່າຍວິນຍານ ເຊິ່ງການບັນລຸຜົນສຳເລັດນັ້ນ
ຕ້ອງອາໄສຄວາມເຂັ້ມແຂງຂອງເຮົາ, ເວລາຂອງເຮົາ, ການອຸທິດຕົວ ແລະ
ການພັດທະນາ ຂອງປະທານ ແລະຄວາມສາມາດທຸກຢ່າງທີ່ເຮົາມີ.

ປະການທີສາມ ການຊົງເອີ້ນຂອງພຣະເຈົ້າຄື ''ການຊົງເອີ້ນຈາກສະຫວັນ''
(ເຮັບເລີ 3:1) ສຽງທີ່ເອີ້ນເຮົາໃຫ້ເຂົ້າສູ່ງານຮັບໃຊ້ຂອງຄຣິສຕຽນ
ນັ້ນມາຈາກສະຫວັນ ບໍ່ວ່າສຽງຈະມາ ''ຢ່າງສະຫງົບແຜ່ວເບົາ" ຫຼື
''ດັ່ງສຽງລຳທານໄຫຼແຮງ'' ກໍເປັນພຣະສຸສຽງຂອງ ພຣະເຈົ້າຜູ້ຊົງອະນຸພາບສູງສຸດ
ສຽງຂອງພຣະອົງມີຣິດອຳນາດສູງສຸດ ແລະ
ຄູ່ຄວນກັບການເຊື່ອຟັງຢ່າງບໍ່ມີເງື່ອນໄຂ
ເມື່ອໂປໂລໄດ້ຍິນກັນຊົງເອີ້ນຂອງພຣະເຈົ້າ ເຂົ້າກ່າວວ່າເຂົາ
''ກໍບໍ່ໄດ້ປຶກສາກັບມະນຸດຄົນໄດ້ເລີຍ'' (ຄາລາເຕຍ 1:16) ໂປໂລ ບໍ່ໄດ້ຂໍຄຳຢືນຍັນ
ຫຼືການອະນຸຍາດຈາກຜູ້ນຳສາສະໜາໃນຊົນຊາດຂອງເຂົາ ຫຼື ແມ່ນແຕ່
ຈາກຜູ້ທີ່ເປັນອັກຄະສາວົກຂອງຶພຣະຄຣິດຢູ່ແລ້ວ ແຕ່ໂປໂລຢູ່ລຳພັງກັບພຣະເຈົ້າ
ເພື່ອທີ່ຈະຄົ້ນພົບພຣະປະສົງຂອງພຣະເຈົ້າໃນຊີວິດຂອງເຂົາ.

ທຸກວັນນີ້ ເມື່ອພຣະເຈົ້າຊົງເອີ້ນຄຣິສຕຽນເຂົ້າສູ່ພັນທະກິດ ປະຕິກິລິຍາທຳອິດ
ຂອງຫຼາຍໆຄົນຄື ການສະແຫວງຫາຄວາມຄິດເຫັນຂອງຜູ້ອື່ນ
ໃຜຈະສົ່ງຂານ້ອຍໄປ? ໃຜຈະເປັນຜູ້ຈັດຫາເງິນທຶນໃຫ້ຂານ້ອຍ?
ຜົນກໍຄືໃນບໍ່ຊ້າພຣະສູສຽງຂອງພຣະເຈົ້າ
ກໍຈະຖືກລົບໄປໂດຍຄວາມຄິດເຫັນຂອງມະນຸດ ແຕ່ສຳລັບຄຣິສຕຽນ
ທີ່ໄດ້ຮັບການຊົງເອີ້ນ ແລະ
ເປັນຜູ້ທີ່ເຕັມໃຈມອບຄວາມເຊື່ອໝັ້ນທັງສິ້ນໄວ້ໃນພຣະເຈົ້າຍ່ອມໄດ້ຮັບການຮັບຮ
ອງ ອັນເປັນສຸກຈາກພຣະວັດຈະນະຂອງພຣະເຈົ້າ.

> "ພຣະອົງຜູ້ຊົງເອີ້ນເອົາເຈົ້າທັງຫຼາຍນັ້ນກໍ່ທ່ຽງທຳ ພຣະອົງນັ້ນແຫຼະ
> ຈະຊົງດຳເນີນງານ." (1ເທສະໂລນິກ5:24 ພຄສ2015)

ການບັນລຸຜົນສຳເລັດຂອງການຊົງເອີ້ນຂອງຄຣິສຕຽນນັ້ນຂຶ້ນຢູ່ກັບພຣະເຈົ້າ
ແຕ່ພຽງຜູ້ດຽວ.

ຢ່າລໍຊ້າ

ປະການສຸດທ້າຍກໍຄື ການຊົງເອີ້ນຂອງພຣະເຈົ້ານັ້ນເປັນເລື່ອງເຊັ່ງດ່ວນ
ເມື່ອໂຢຊວາປະກາດ ຕໍ່ໜ້າຊົນຊາດອິດສະຣາເອນ ໃຫ້ຮີບໃຊ້ພຣະເຈົ້າເຂົາກ່າວວ່າ:
"ຈົ່ງຕັດສິນໃຈໃນມື້ນີ້ວ່າ ພວດເຈົ້າຈະບົວລະບັດຮັບໃຊ້ຜູ້ໃດ." (ໂຢຊວຍ 24:15),
ສ່ວນເພງສັນລະເສີນ 95:7ກ່າວວ່າ :

> “ວັນນີ້ ຈົ່ງເຊື່ອຟັງສິ່ງທີ່ພຣະອົງກ່າວ”

ການຊົງເອີ້ນຂອງພຣະເຈົ້າ ບໍ່ໄດ້ຖ້າຄວາມສະດວກສະບາຍຂອງມະນຸດ
ເຮົາບໍ່ອາດເລື່ອນ ການຕັດສິນໃຈຂອງເຮົາທີ່ຈະຍ່ອມຈຳນົນຕໍ່ພຣະອົງໄປຍັງ
"ຊ່ວງເວລາທີ່ສະດວກ" ຫຼາຍກວ່ານີ້ມານເວົ້າວ່າ "ມື້ອື່ນ"
ແຕ່ພຣະເຈົ້າຊົງຕຣັດວ່າ: "ວັນນີ້"

ໃນສຸພາສິດ 1:24-32
ມີຄຳເຕືອນຢ່າງຈິງຈັງບໍ່ໃຫ້ເລື່ອນການຕອບສະໜອງຂອງເຮົາ
ຕໍ່ການຊົງເອີ້ນຂອງພຣະເຈົ້າ ພຣະຄຳຂໍ້ນີ້ບັນຍາຍເຖິງຜູ້ຄົນທີ່ຫັນໜີ
ຈາກການຊົງເອີ້ນ ຂອງພຣະເຈົ້າເມື່ອພວກເຂົາຢູ່ໃນຄວາມຈະເລີນຮຸ່ງເຮືອງ
ແລະຄວາມຕ້ອງການ ທີ່ພຽງພໍແລ້ວ, ເມື່ອພວກເຂົາບ່ຽນໃຈ
ແລະຫັ້ນກັບໄປສະແຫ່ວງຫາພຣະເຈົ້າ ມັນກໍສາຍເກີນໄປແລ້ວ!
ເພາະພຣະເຈົ້າຊົງຖອນຕົວຂອງພຣະອົງອອກມາແລ້ວ
ສຽງທີ່ເຄີຍເອີ້ນນັ້ນກັບຫງຽບໄປ ເວລາແຫ່ງໂອກາດໄດ້ຜ່ານພົ້ນໄປແລ້ວ.

ບໍ່ວ່າການຊົງເອີ້ນ ຂອງພຣະອົງຕໍ່ເຈົ້າເປັນການຊົງເອີ້ນທົ່ວໄປຊໍ່ນ: (ໃນມີກາ
6:8) ຫຼື ການເອີ້ນຢ່າງສະເພາະເຈາະຈົງເຊັ່ນ: (ໃນ1ເປໂຕ 4:11)
ຂ້າພະເຈົ້າຂໍໜຸນໃຈ ໃຫ້ເອົາໃຈໃສ່ຕໍ່ການຊົງເອີ້ນຂອງພຣະອົງ
ແລະຈົ່ງກະທຳສິ່ງນັ້ນຢ່າງຈິງຈັງ ຈົ່ງອົດທົນ
ຕໍ່ບົດທົດສອບຂອງພຣະອົງຈົ່ງອຸທິດຕົນເພື່ອເຮັດກິດຈະການຂອງສະຫວັນ
ຢ່າໃຫ້ເຈົ້າກາຍເປັນອີກໜຶ່ງຊື່ຂອງ (ຫຼາຍໆຄົນ)
ທີ່ຖືກເອີ້ນແຕ່ບໍ່ເຄີຍຖືກເລືອກເລີຍ.

ຫາກເຈົ້າຕ້ອງການທີ່ຈະຕອບສະໜອງຕອນນີ້ຂໍໃຫ້ເຈົ້າຮ່ວມອະທິຖານສັ້ນໆກັບ
ຂ້າພະເຈົ້າຕາມນີ້ ?

*ຂ້າແດ່ພຣະເຈົ້າ ຂ້າພຣະອົງຕ້ອງການຕອບສະໜອງຕໍ່ການຊົງເອີ້ນຂອງພຣະອົງ
ທີ່ຊົງມີຕໍ່ຊີວິດຂອງຂ້າພຣະອົງ ຂ້າພຣະອົງຕ້ອງການຮັບໃຊ້ພຣະອົງ ແລະ
ໄດ້ຮັບການຊົງເລືອກຈາກພຣະອົງ
ເພື່ອໃຫ້ແຜນການທີ່ພຣະອົງເຊິ່ງມີໄວ້ສຳລັບຂ້າພຣະອົງ ແລະ
ສຳລັບຜູ້ທີ່ພຣະອົງຊົງເອີ້ນຂ້າພຣະອົງໃຫ້ຮັບໃຊ້ນັ້ນບັນລຸຜົນສຳເລັດບໍ່ວ່າຂ້າພຣະອົ
ງ ຈະຕ້ອງຈ່າຍລາຄ່າເທົ່າໃດກໍ່ຕາມ ຂ້າພຣະອົງຈະບໍ່ລໍຊ້າ ວັນນີ້ ແລະໃນເວລານີ້
ຂ້າພຣະອົງຂໍກ່າວກັບພຣະອົງວ່າ "ຂໍຊົງໃຊ້ຂ້າພຣະອົງເທີດ" ອາແມນ.*

ຈົດໝາຍຄຳສອນ

ຂໍ້ຄວາມ ຖອດສຽງ: TL-L143-100-LAO
ບັນທຶກຫຼ້າສຸດ: 30 Oct 2024
ເວັບໄຊທ໌: derekprince.com/lao



ປຶ້ມຄຳສອນ

ໃຫ້ຄວາມຈະແຈ້ງ ແລະ ຂະຫຍາຍຄວາມເຂົ້າໃຈ ຂອງທ່ານກ່ຽວກັບ ພຣະຄຳພີ ດ້ວຍ collection ປຶ້ມຄຳສອນ ຄຣິດສະຕຽນ ຂອງ ອາຈານ ດເຣັກ ປຶ້ຣນຊ



ການຜ້ຳດ່ຽວ ປະຈຳວັນ

ຄົ້ນຫາ ບົດຜ້ຳດ່ຽວປະຈຳວັນ ທີ່ສ້ຳງ ແຮງບັນດານໃຈຕາມຫຼັກການ ພຣະຄຳພີ ໂດຍຄຳ ສອນພາກປະຕິບັດ ຂອງ ອາຈານ ດເຣັກ ປຶ້ຣນຊ ເພື່ອຍົກລະດັບ ຄວາມເຊື່ອ ຄຣິດສະຕຽນ ຂອງທ່ານໃຫ້ຜິຣ.



ລາຍການວິທະຍຸ ທີ່ເປັນມ່ລະດົກ

ຮັບຟັງຖ້ອຍຄຳ ທີ່ສ້ຳງແຮງບັນດານໃຈ 10 ນາທີ ແລະ ເຊື່ອມຕໍ່ ຄວາມເຊື່ອ ເຂົ້ຳກັບຊີວິດ ຜ່ານ podcast ເຊິ່ງເປັນມ່ລະດົກ ຂອງອາຈານ ດເຣັກ ປຶ້ຣນຊ



ຄຳເທດສະໜາ

ຮັບຊົມ ຄຳເທດສະໜາ ເຊິ່ງເປັນຕົ້ນສະບັບ ທີ່ທຳສ້ຳເນ້ຳຂຶ້ນໃໝ່ ໃນລະບົບ ດິຈິຕ້ອນ ໂດຍ ອາຈານ ດເຣັກ ປຶ້ຣນຊ ລວມທ້ຳຂໍ້ຄວາມ ຖອດສຽງ ສະບັບເຕັມ (ດາວໂຫຼດຜິຣ)



ແອັບທີ່ເປັນທ່ຳງ່ານ

ດາວໂຫຼດ ແອັບທີ່ເປັນທ່ຳງ່ານ ຂອງພັນທະກິດ ດເຣັກ ປຶ້ຣນ ໄດ້ຜິຣ ເພື່ອເສີມສ້ຳງຄວາມເຊື່ອຂອງ ທ່ານໄດ້ທຸກທີ່ ທຸກເວລ



ການປ່າວປະກາດ

ປ່າວປະກາດຊີວິດ ແລະ ພົບກັບປະສົບການ ໃນລິດອຳນ່ຳດຂອງຖ້ອຍຄຳ ພຣະເຈ້ຳ ທີ່ ສ່ຳມ່ຳດປ່ຽນແປງຊີວິດໄດ້ ໂດຍຄຳປ່າວປະກາດຂອງເຮ້ຳ ທີ່ຂຽນຕ່ຳມຫຼັກການຂອງ ພຣະຄຳພີ